# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 28 ກໍຣະກະດາ 2024 (07-28-2024)

---

## ບາຣາກ

**ຈຸດສຳຄັນໃນບົດຮຽນ:** ການຮັບໃຊ້ຂອງທ່ານຕໍ່ພຣະເຈົ້າມີຄ່າທີ່ສຸດ, ບໍ່ວ່າຜູ້ໃດຈະໄດ້ຮັບກຽດຊື່ສຽງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ອາເລັກແຊນເດີ ກແຣມ ແບວ (Alexander Graham Bell), ໄດ້ຮັບກຽດຊື່ສຽງ ກັບການປະດິດໂທລະສັບ. ບາງຄົນໂຕ້ຖຽງວ່າ ອາລີຊາ ກເຣ (Elisha Gray) ບໍ່ໄດ້ຮັບການຍົກຍ້ອງທີ່ລາວສົມຄວນໄດ້ຮັບ, ເຖິງແມ່ນວ່າ, ຍ້ອນວ່າລາວໄດ້ນຳສະເໜີສິດທິບັດຂອງລາວໃນມື້ດຽວກັນແລະຢູ່ໃນຫ້ອງການດຽວກັນກັບແບວເຊັ່ນດຽວກັນ, ເຖິງແມ່ນວ່າ ຄຣິກ (Crick), ວັດເຊີນ (Watson), ແລະ ວຽວເຊີນ (Wilson) ໄດ້ຮັບລາງວັນໂນແບວ (Nobel) ໃນ ສະຣີຣະສາດ (Physiology) ຫຼືການແພດສຳລັບການຄົ້ນພົບດີແອນເອ (DNA), ຂອງພວກເຂົາເຈົ້າ, ບາງຄົນເຊື່ອວ່າ ໂຣຊາລິນ ຟແຣງລິນ (Rosalind Frankin) ບໍ່ໄດ້ຮັບການຍ້ອງຍໍທີ່ພຽງພໍສຳລັບການເຮັດວຽກຂອງນາງໃນໜ້າວຽກຢ່າງດຽວກັນ. ເມື່ອພວກເຮົາມຸ້ງໜ້າເຂົ້າຫາສີ່ແຍກທີ່ມີຄວາມວຸ້ນວາຍກັບໄຟຈາລະຈອນ, ພວກເຮົາບໍ່ຄ່ອຍຮັບຮູ້ລະບົບການປະຕິບັດງານຂອງມັນ. ມັນອາດຈະບໍ່ມີຜູ້ໃດໄດ້ຮັບການຍົກຍ້ອງຕາມທີ່ມັນສົມຄວນຈະໄດ້ຮັບ, ແຕ່ສິ່ງທີ່ດີທີ່ສຸດສຳລັບພວກເຮົາຍັງມີຢູ່ຢ່າງຕໍ່ເນື່ອງ, ການທຳງານ, ແລະການກະທຳອັນໃດກໍ່ຕາມ. ທ່ານເຄີຍປະສົບກັບຄວາມຜິດຫວັງບໍ່ເມື່ອມີຜູ້ໃດຜູ້ນຶ່ງເອີ່ຍຊື່ຂອງທ່ານ, ໂດຍສະເພາະສິ່ງນັ້ນມັນເກີດຂຶ້ນໂດຍການປະດິດຄິດແຕ່ງຂອງທ່ານ? ທ່ານເຄີຍລໍຖ້າດ້ວຍຄວາມຫວັງຕາມປົກກະຕິງ່າຍໆບໍ່? ຄຳ "ຂອບໃຈ" ຈາກຄົນທີ່ທ່ານໄດ້ຊ່ວຍ, ແຕ່ມັນບໍ່ເຄີຍເກີດຂຶ້ນບໍ່? ໃນການສຶກສານີ້, ພວກເຮົາຈະເຫັນວ່າບາຣາກໄດ້ຖືກບອກລ່ວງໜ້າວ່າລາວຈະບໍ່ໄດ້ຮັບກຽດຊື່ສຽງຂອງການສູ້ຮົບທີ່ລາວຈະນຳພາແລະຕໍ່ສູ້, ແຕ່ລາວຍັງຈະໄປສນາມຮົບແລະເຮັດຕາມທີ່ພຣະຜູ້ເປັນເຈົ້າຕ້ອງການໃຫ້ລາວເຮັດ. ນີ້ເປັນບົດຮຽນທີ່ສຳຄັນສຳລັບພວກເຮົາແຕ່ລະຄົນ. ພວກເຮົາບໍ່ຕ້ອງຍອມແພ້, ເພາະການຮັບໃຊ້ຂອງພວກເຮົາຕໍ່ພຣະເຈົ້າແມ່ນມີຄຸນຄ່າສູງ, ບໍ່ວ່າຜູ້ໃດຈະໄດ້ຮັບຜົນປໂຍດກໍ່ຕາມ.

*ອັນໃດເປັນສິ່ງນຶ່ງທີ່ປະດິດຂຶ້ນທີ່ທ່ານມັກທີ່ສຸດຈາກປວັດສາດ?*.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

### 1. ພວກຜູ້ປົກຄອງ 4:4-8.

*4. ໃນເວລານັ້ນນາງເດໂບຣາເມັຽຂອງລັບປິໂດດ ເປັນຜູ້ປະກາດພຣະທັມແລະປົກຄອງພວກອິສຣາເອນ. 5. ພວກອິສຣາເອນໄດ້ມາຫາເພິ່ນຢູ່ກ້ອງຕົ້ນໄມ້ຂອງເດໂບຣາ ຢູ່ລະຫວ່າງກາງເມືອງຣາມາແລະເມືອງເບັດເອນເພື່ອໃຫ້ເພິ່ນຕັດສິນຢ່າງຍຸຕິທັມໃນບັນຫາຕ່າງໆ. 6. ນາງເດໂບຣາຈຶ່ງໃຊ້ຄົນໄປຫາບາຣາກລູກຊາຍຂອງອາບີໂນອາມທີ່ມາຈາກເມືອງກາເດັດໃນແຂວງເນັບທາລີ ໂດຍບອກວ່າ, "ພຣະຜູ້ເປັນເຈົ້າຂອງພວກອິສຣາເອນໄດ້ສັ່ງແກ່ເຈົ້າວ່າ ໃຫ້ເກນເອົາພວກຜູ້ຊາຍສິບພັນຄົນຈາກຕະກູນເນັບທາລີ ແລະເຊບູໂລນເພື່ອໄປຍັງພູຕາໂບ. 7. ສ່ວນເຮົາຈະເຮັດໃຫ້ຊີເຊຣາແມ່ທັບຂອງເຈົ້າຊີວິດຢາບິນພ້ອມທັງລົດຮົບແລະຝູງທະຫານອອກໄປຕໍ່ສູ້ເຈົ້າຢູ່ຫ້ວຍກີໂຊນ ແຕ່ເຮົາຈະໃຫ້ເຈົ້າຊະນະລາວ." 8. ບາຣາກໄດ້ເວົ້າຕໍ່ນາງເດໂບຣາວ່າ, "ຂ້ອຍຈະອອກໄປຖ້າວ່າເຈົ້າໄປກັບຂ້ອຍ ແຕ່ວ່າຖ້າເຈົ້າບໍ່ໄປຂ້ອຍກໍຈະບໍ່ໄປຄືກັນ."*

ແຕ່ໜ້າເສັ້ຽດາຍ, ວົງຈອນໄດ້ເລີ້ມຕົ້ນແລະສືບຕໍ່ເກີດຂຶ້ນຊ້ຳແລ້ວຊ້ຳອີກ. ໂມເຊໄດ້ນຳພາຊາວອິສຣາເອນອອກຈາກການເປັນທາດໃນປະເທດເອຢິບເດີນຜ່ານຖິ່ນແຫ້ງແລ້ງກັນດານ. ໂຢຊວຍໄດ້ພາພວກເຂົາເຂົ້າໄປໃນແຜ່ນດິນແຫ່ງພັນທະສັນຍາ (ໂຢຊວຍ 1:1-3), ບ່ອນທີ່ພວກເຂົາໄດ້ເອົາຊະນະແຜ່ນດິນນັ້ນແລະເຂົ້າອາສັຍຢູ່ຢ່າງມີຄວາມສງົບສຸກ. ຫຼັງຈາກຄົນລຸ້ນຂອງໂຢຊວຍໄດ້ຕາຍໄປ (ພວກຜູ້

ປົກຄອງ 2:10), ຄົນລຸ້ນຕໍ່ມາໄດ້ເຮັດບາບແລະຫັນໜີຈາກພຣະເຈົ້າ (ຂໍ້ 11-13). ດັ່ງນັ້ນ, ພຣະເຈົ້າໄດ້ລົງໂທດຊາວອິສຣາເອນໂດຍການປ່ອຍໃຫ້ສັດຕູຂອງພວກເຂົາເອົາຊະນະພວກເຂົາແລະປຸ້ນເອົາຊັບສິນສິ່ງຂອງຂອງພວກເຂົາ (ຂໍ້ 14-15), ແຕ່ຫຼັງຈາກນັ້ນພຣະເຈົ້າໄດ້ມີຄວາມເມດຕາແລະຕັ້ງຜູ້ປົກຄອງຜູ້ທີ່ຈະຊ່ວຍປະຊາຊົນອິສຣາເອນອອກຈາກສັດຕູຂອງພວກເຂົາ, ຟື້ນຟູຄວາມສັມພັນຂອງພວກເຂົາກັບພຣະເຈົ້າຄືນໃໝ່, ແລະຟື້ນຟູການຄອບຄອງຂອງພວກເຂົາ, ເຮັດໃຫ້ເກີດຄວາມສງົບສຸກໃນແຜ່ນດິນ (ຂໍ້ 16), ຫຼັງຈາກນັ້ນບໍ່ດົນ, ພວກເຂົາໄດ້ກັບໄປເຮັດບາບອີກ: ການເພີດເພີນກັບຄວາມສຳເຣັດ, ຕົກຢູ່ໃນຄວາມບາບ, ປະສົບກັບຄວາມທຸກທໍຣະມານ, ພຣະເຈົ້າໄດ້ໃຫ້ຜູ້ນຳ (ຂໍ້ 17-19). ໃນຝ່າຍຕົງກັນຂ້າມຂອງພວກເຂົາແມ່ນເຄັ່ງຕຶງແລະມີຄວາມກົດດັນ, ຫຼັງຈາກແປດສິບປີທີ່ພວກເຂົາຢູ່ຢ່າງສງົບສຸກພາຍໃຕ້ການປົກຄອງຂອງເອຮຸດ (3:31), ຊາວອິສຣາເອນໄດ້ເຮັດບາບ, ແລະສຳລັບຊາວປີທີ່ພວກເຂົາທົນທຸກຢູ່ພາຍໃຕ້ການປົກຄອງຂອງກະສັດຢາບິນແລະນາຍພົນຂອງລາວ, ຊີເຊຣາ, ຜູ້ມີກຳລັງທະຫານທີ່ຍິ່ງໃຫຍ່ລາວມີຣົດຮົບ 900 ຄັນ (4:1-3). ໃນຄວາມສິ້ນຫັວງ, ຊາວອິສຣາເອນໄດ້ຮ້ອງໄຫ້ຫາພຣະເຈົ້າ (ຂໍ້ 3). ພວກເຮົາທຸກຄົນກໍ່ປະເຊີນກັບເວລາທີ່ໝົດຫັວງ. ເມື່ອພວກເຮົາປະເຊີນກັບການຂັດແຍ້ງແລະອຸປສັກທີ່ບໍ່ສາມາດຜ່ານຜ່າໄປໄດ້, ມັນກໍ່ເຖິງເວລາທີ່ພວກເຮົາຈະຂໍຄວາມຊ່ວຍເຫຼືອຈາກພຣະເຈົ້າ. ພຣະເຈົ້າມີແຜນການສຳລັບພວກເຮົາສເມີສຳລັບການປະເຊີນໜ້າກັບບັນຫາ, ພຣະເຈົ້າຈະໃຫ້ຄວາມຊ່ວຍເຫຼືອຜູ້ໃດ? ເດໂບຣາແລະບາຣາກ. ເຊັ່ນດຽວກັນກັບພວກແມ່ຍິງສ່ວນຫຼວງຫຼາຍ, ເດໂບຣາຕ້ອງໃສ່ໃຈກັບວຽກງານຢູ່ໃນເຮືອນແລະນອກເຮືອນຂອງນາງ. ໃນຖານະເປັນຜູ້ປະກາດພຣະທັມ, ນາງໄດ້ເປັນຕົວແທນພຣະເຈົ້າເວົ້າກັບປະຊາຊົນ, ໃນຖານະຜູ້ປົກຄອງ, ນາງໄດ້ແກ້ໄຂຂໍ້ຂັດແຍ້ງ (ຂໍ້ 4-5). ຊື່ຂອງນາງມີຄວາມໝາຍວ່າ “ນໍ້າເຜີ້ງ”, ແລະຄືກັບເຜີ້ງ, ເດໂບຣາຫຍຸ້ງຢູກັບວຽກຂອງນາງແລະຖືກເອີ້ນໃຊ້ໃນຊີວິດຂອງນາງ. ພວກເຮົາຮູ້ພຽງເລັກນ້ອຍກ່ຽວກັບບາຣາກ, ພໍ່ຂອງລາວແມ່ນອາບີໂນອາມ, ແລະລາວມາຈາກຊົນເຜົ່າເນັບທາລີ(ຂໍ້ 6). ພວກເຮົາຍັງຮູ້ວ່າພຣະເຈົ້າໄດ້ຮຽກເອີ້ນໃຫ້ບາຣາກເຮັດບາງສິ່ງບາງຢ່າງທີ່ທ້າທາຍທີ່ປະຊາຊົນກຳລັງປະເຊີນຢູ່. ພຣະເຈົ້າໄດ້ຈັດຕຽມຄົນງານຂອງພຣະອົງເພື່ອແກ້ໄຂບັນຫາທີ່ຢູ່ໃນມື, ມັນມີຄວາມແຕກຕ່າງກັນຫຼາຍ, ແຕ່ພຣະເຈົ້າໄດ້ໃຊ້ພວກເຂົາເປັນຄົນງານທີ່ຈະນຳການປົດປ່ອຍໃຫ້ກັບຊາວອິສຣາເອນ. ພຣະເຈົ້າມັກໃຊ້ຄົນທີ່ມີຄວາມແຕກຕ່າງກັນແລະມີຄວາມສາມາດທີ່ຫຼາກຫຼາຍທີ່ເປັນໂອກາດທີ່ຈະມີໄຊຊະນະເມື່ອພວກເຂົາມາຮ່ວມເຂົ້າກັນແລະເຮັດວຽກຮ່ວມກັນ. ເດໂບຣາເປັນແມ່ຍິງ, ບາຣາກເປັນຜູ້ຊາຍ, ພຣະເຈົ້າໄດ້ໃຊ້ສະຕິປັນຍາຂອງເດໂບຣາ; ພຣະເຈົ້າໃຊ້ບາຣາກເປັນນັກຮົບ. ປະຊາຊົນໄດ້ມາຫາເດໂບຣາເພື່ອໃຫ້ນາງແກ້ໄຂຂໍ້ຂັດແຍ້ງຂອງພວກເຂົາ, ບາຣາກໄດ້ໄປຫາປະຊາຊົນເພື່ອເຕົ້າໂຮມກອງທັບເພື່ອປົດປ່ອຍພວກເຂົາ. ເດໂບຣາພ້ອມທີ່ຈະເຮັດທຸກສິ່ງທີ່ພຣະເຈົ້າສັ່ງນາງ. ບາຣາກມີຄວາມລັ່ງເລແລະບໍ່ແນ່ນອນໃຈກ່ຽວກັບຄວາມສາມາດຂອງຕົນເອງ, ບາງຄັ້ງເຖິງແມ່ນໂອກາດທີ່ດີທີ່ສຸດທີ່ສາມາດນຳໃຊ້ການກະຕຸ້ນການມອງໃນແງ່ດີເພື່ອຂັບເຄື່ອນພວກເຮົາອອກຈາກການເປັນສ່ວນປະກອບເຂົ້າໄປໃນເສັ້ນທາງສູ້ຮົບແລະຜ່ານເຂົ້າສູ່ເສັ້ນທາງຂອງຄວາມສຳເຣັດ. ບາຣາກຕ້ອງການຄວາມໝັ້ນໃຈ. ພຣະເຈົ້າໄດ້ຊ່ວຍບາຣາກໃຫ້ເອົາຊະນະຄວາມລັ່ງເລໃຈຂອງລາວແນວໃດ? ພຣະເຈົ້າໄດ້ໃຊ້ເດໂບຣາເພື່ອຢັ້ງຢືນການເອີ້ນໂດຍການຖາມບາຣາກວ່າ “ພຣະເຈົ້າຢາເວພຣະເຈົ້າຂອງຊາວອິສຣາເອນໄດ້ສັ່ງເຈົ້າບໍ່? (ຂໍ້ 6). ເຖິງແມ່ນວ່າພຣະເຈົ້າໄດ້ສື່ສານກັບບາຣາກແລ້ວກໍ່ຕາມ. ເດໂບຣາຍັງຊ່ວຍຊີ້ແຈງບົດບາດຂອງບາຣາກໃນການລວບລວມກອງທັບຮ່ວມກັນແລະຮັບປະກັນລາວກ່ຽວກັບການມີສ່ວນຮ່ວມແລະໄຊຊະນະຂອງພຣະເຈົ້າ. ພຣະເຈົ້າສັນຍາວ່າຈະມອບສິເສຣາໃຫ້ກັບບາຣາກ. ເຖິງວ່າຈະໄດ້ຮັບການໜູນໃຈແລະການຊຸກຍູ້ຢ່າງຈິງຈັງ, ບາຣາກຍັງຮູ້ສຶກວ່າຈຳເປັນຕອ້ງໄດ້ຮັບການສນັບສນູນຈາກການຊົງສະຖິດຢູ່ແລະກໍ່ຂໍໃຫ້ເດໂບຣາໄປກັບລາວ. ໃນທີ່ສຸດ, ລາວເປີດຫູຂອງລາວຟັງສິ່ງທີ່ພຣະເຈົ້າເວົ້າ, ລາວເປີດຕາຂອງລາວເພື່ອເບິ່ງຄວາມຕ້ອງການທີ່ກຳລັງປະເຊີນກັບຊຸມຊົນຂອງລາວ, ລາວເປີດໃຈທີ່ຈະເປັນສ່ວນນຶ່ງຂອງເພື່ອນຮ່ວມງານເພື່ອເຮັດໃຫ້ເກີດຄວາມແຕກຕ່າງຢ່າງແທ້ຈິງ.

## 2. ພວກຜູ້ປົກຄອງ 4:12-16.

*12. ຕໍ່ມາ ມີຄົນບອກຊີເຊຣາວ່າ, “ບາຣາກລູກຊາຍຂອງອາບີໂນອາມໄດ້ໄປເຖິງພູຕາໂບແລ້ວ.” 13. ສ່ວນຊີເຊຣາກໍເອົາລົດຮົບເກົ້າຮ້ອຍຄັນພ້ອມທັງກຳລັງພົນທັງໝົດ ຍົກທັບອອກຈາກເມືອງຮາໂຣເຊັດຮາໂກຍີມໄປຍັງຫ້ວຍກີໂຊນ. 14. ຝ່າຍນາງເດໂບຣາໄດ້ບອກ*

*ບາຣາກວ່າ, "ຈົ່ງອອກໄປມື້ນີ້ເປັນມື້ທີ່ພຣະຜູ້ເປັນເຈົ້າຊົງໃຫ້ເຈົ້າຊະນະຊີເຊຣາພຣະອົງຈະຊົງນຳໜ້າເຈົ້າ" ດັ່ງນັ້ນບາຣາກຈຶ່ງນຳທະຫານສິບພັນຄົນລົງມາຈາກພູຕາໂບໄປຕໍ່ສູ້ຊີເຊຣາ. 15. ພຣະຜູ້ເປັນເຈົ້າກໍຊົງບັນດານໃຫ້ຊີເຊຣາພ້ອມດ້ວຍກອງທະຫານແລະຣົດຮົບສັບສົນວຸ້ນວາຍກັນຊີເຊຣາຈຶ່ງໂດດອອກຈາກຣົດຮົບແລະແລ່ນໜີໄປ. 16. ສ່ວນບາຣາກກໍໄລ່ຕິດຕາມຣົດຮົບ ແລະກອງທະຫານໄປຈົນຮອດເມືອງຮາໂຣເຊັດຮາໂກຢິມ ແລ້ວທະຫານທັງໝົດຂອງຊີເຊຣາໄດ້ຖືກຂ້າຕາຍບໍ່ເຫຼືອຈັກຄົນ.*

ບາຣາກມີເຫດຜົນອັນຖືກຕ້ອງທີ່ຖືກຂົ່ມຂູ່. ເພາະຊີເຊຣາໄດ້ກົດຂີ່ປະຊາຊົນອິສຣາເອນເປັນເວລາຊາວປີ. ບາຣາກໄດ້ມຸ້ງຕົງໄປເຖິງການສ້າງຕັ້ງທີມງານແລະປາຖນາທີ່ຈະມີພຣະຜູ້ເປັນເຈົ້ານຳໜ້າພວກເຂົາ. ເດໂບຣາໃນຖານະທີ່ເປັນຜູ້ປະກາດພຣະທັມທີ່ເປັນຕົວແທນຂອງພຣະເຈົ້າ, ແມ່ນສິ່ງຈຳເປັນແລະມີຄວາມຂອບໃຈ. ທະຫານຂອງບາຣາກປະກອບດ້ວຍຄອບຄົວແລະໝູ່ເພື່ອນຂອງລາວຈາກຕະກູນເນັບທາລີແລະຊົນເຜົ່າໃກ້ຄຽງຂອງເຊບູໂລນ (ຜູ້ປົກຄອງ 4:10). ອີງຕາມບົດເພງຂອງເດໂບຣາ, ຊົນເຜົ່າທີ່ເພີ້ມເຕີມເຂົ້າຮ່ວມມີເຫດຜົນທີ່ດີແລະສົ່ງນັກຕໍ່ສູ້ຈາກເອຟຣາອິມ, ເບັນຈາມິນ, ແລະອິຊາຄາຫຼັງຈາກໄຊຊະນະ (5:14-15), ແນວໃດກໍ່ຕາມ, ເຜົ່າຣູເບັນ, ດານ, ອາເຊ, ແລະກາດ (ກິເລອາດ) ປະຕິເສດທີ່ຈະຊ່ວຍເຫຼືອ (ຂໍ້ 15-17). ບາຣາກບໍ່ໄດ້ໃສ່ໃຈກັບຜູ້ທີ່ບໍ່ຍອມຊ່ວຍເຫຼືອລາວ. ແທນທີ່ຈະເປັນດັ່ງນັ້ນ, ລາວໄດ້ສຸມໃຈໃສ່ຜູ້ທີ່ໄປກັບລາວແລະໄດ້ປອບໂຍນໂດຍຮູ້ວ່າພຣະເຈົ້າຢູ່ກັບລາວ, ເຖິງແມ່ນວ່າມີຄວາມບໍ່ລົງລອຍກັນກໍ່ຕາມ, ບາຣາກໄດ້ຍອມແພ້ຕໍ່ພຣະປະສົງຂອງພຣະເຈົ້າ. ລາວຕົກລົງທີ່ຈະໄປ, ເຖິງແມ່ນວ່າລາວຮູ້ວ່າຄົນອື່ນຈະໄດ້ຮັບການຍົກຍ້ອງສຳລັບໄຊຊະນະນັ້ນ. ເປັນການສະແດງໃຫ້ເຫັນຄວາມຖ່ອມໃຈແລະການເສັຽສຣະທີ່ແທ້ຈິງ! ຂອງບາຣາກ, ບາຣາກໄດ້ເຊື່ອຟັງແຜນຍຸດທະສາດຂອງພຣະເຈົ້າສຳລັບການປະຕິບັດວຽກງານທີ່ຍິ່ງໃຫ່ຍນີ້. ທະຫານຂອງເພິ່ນໄດ້ເຕົ້າໂຮມກັນຢູ່ທີ່ຕັ້ງຍຸດທະສາດຢູ່ເທິງພູຕາໂບ, ຊຶ່ງຢູ່ໃກ້ກັບສນາມຮົບໃຫ່ຍຂອງເມກີໂດ. ພູເຂົາຕາໂບເປັນຍຸດທະສາດສຳລັບການໂຈມຕີແບບຮຸກຮານ, ຍ້ອນວ່າຊາວອິສຣາເອນສາມາດລົງມາຈາກພູເຂົາເຂົ້າໄປໃນຮ່ອມພູທີ່ມີຄວາມສູງ, ບາຣາກເຊື່ອຟັງເຮັດຕາມແຜນການຂອງພຣະເຈົ້າ. ບາຣາກມີຄວາມເຂັ້ມແຂງແລະຕັ້ງໃຈໃນການສູ້ຮົບກັບຊີເຊຣາ. ທ່ານອາດນຶກພາບໄດ້ວ່າມື້ນັ້ນບາຣາກຕ້ອງໄດ້ເຮັດຫັຽງທີ່ຢືນຢູ່ເທິງພູເຂົາຕາໂບ? ໃນເວລາທີ່ຜູ້ໃດຜູ້ນຶ່ງໄດ້ເຕືອນຊີເຊຣາກ່ຽວກັບກອງທັບທະຫານຂອງອິສຣາເອນ, ຊີເຊຣາໄດ້ມາພ້ອມກັບກອງທັບທັງໝົດຂອງລາວ (ຂໍ້ 12-13). ກອງທັບຊີເຊຣາທີ່ມີມ້າແລະຣົດຮົບເປັນກຳແພງເຫຼັກທີ່ບໍ່ສາມາດທຳລາຍໄດ້. ແຕ່ເຖິງແມ່ນວ່າການເຕົ້າໂຮມຂອງພວກເຂົາເປັນການຢືນຢັນເພາະວ່າເດໂບຣາໄດ້ທຳນວາຍໄວ້ວ່າພຣະເຈົ້າຈະເຮັດໃຫ້ຊີເຊຣາອອກໄປຕໍ່ສູ້ເຈົ້າຢູ່ທີ່ນັ້ນ (ຂໍ້ 7). ອີງຕາມບົດເພງຂອງເດໂບຣາ, ອິສຣາເອນເຖິງແມ່ນບໍ່ມີພຽງແຕ່ໂລ້ແລະຫອກເພື່ອຕໍ່ສູ້ໃນສົງຄາມ (5:8). ເມື່ອໄດ້ຮັບຄຳສັ່ງໃຫ້ໄປໂດຍບໍ່ຊັກຊ້າ, ບາຣາກໄດ້ນຳພາກອງທັບເຂົ້າສູ່ສນາມຮົບຢ່າງບໍ່ຢ້ານກົວ (4:14). ບາຣາກບັນລຸຜົນສຳເຣັດໃນມື້ນັ້ນຍ້ອນການຊ່ວຍເຫຼືອຂອງພຣະເຈົ້າ, ໂດຍການເຮັດໃຫ້ກອງທັບຂອງຊີເຊຣາຕົກໃຈ, ພຣະເຈົ້າໄດ້ປ້ອງກັນພວກເຂົາຈາກການໄດ້ຮັບໄຊຊະນະ (ຂໍ້ 15). ພຣະເຈົ້າໄດ້ສັ່ນສະເທືອນຄວາມໝັ້ນໃຈຂອງພວກເຂົາ, ພຣະອົງໄດ້ເຮັດໃຫ້ຈິດໃຈຂອງພວກເຂົາສັບສົນ, ຢຽບຢ່ຳຈິດໃຈຂອງພວກເຂົາ, ແລະປິດພວກເຂົາອອກຈາກການຊ່ວຍເຫຼືອທາງຈິດວິນຍານ, ພຣະເຈົ້າເຮັດໃຫ້ແຜນຂອງຊີເຊຣາວຸ້ນວາຍ, ສຳລັບຣົດຮົບທີ່ຈະປະສົບຜົນສຳເຣັດ, ສະພາບດິນຟ້າອາກາດຕ້ອງແຫ້ງແລ້ງ, ຖ້າບໍ່ດັ່ງນັ້ນ, ລໍ້ຣົດຈະຕິດຢູ່ໃນຕົມ, ພຣະເຈົ້າໄປປ່ຽນແປງສະພາບດິນຟ້າອາກາດຕໍ່ສູ້ຊີເຊຣາ, ເຖິງແມ່ນວ່າຊາວການາອານນະມັສການພະບາອານເປັນພະເຈົ້າຂອງພະຍຸ, ອີງຕາມພວກຜູ້ປົກຄອງ 5:4. "ທ້ອງຟ້າມີຝົນຕົກ, ແລະເມກໄດ້ຖອກນໍ້າ", ຝົນຕົກເຮັດໃຫ້ນໍ້າຖ້ວມແລະເປັນສາຍນໍ້າຖົ່ງລົງມາ, ເຮັດໃຫ້ຣົດຮົບຕິດຢູ່ໃນຂີ້ຕົມ (ຂໍ້ 20-22). ຊີເຊຣາຕ້ອງອອກຈາກຣົດຮົບຂອງຕົນແລ້ວແລ່ນໜີໄປຕີນເປົ່າ (4:15). ບາຣາກໄດ້ໄລ່ຕິດຕາມກອງທັບຂອງຊີເຊຣາຈົນກ່ວາເຂົາໄດ້ທຳລາຍທຸກຄົນບໍ່ເຫຼືອແມ່ນແຕ່ຄົນດຽວ (ຂໍ້ 16).

## 3. ພວກຜູ້ປົກຄອງ 5:1-5

*1. ໃນມື້ນັ້ນນາງເດໂບຣາແລະບາຣາກຜູ້ເປັນລູກຊາຍຂອງອາບີໂນອາມໄດ້ຮ້ອງເພງວ່າ, 2. ຈົ່ງສັນລະເສີນພຣະຜູ້ເປັນເຈົ້າຊາວອິສຣາເອນເຕັມໃຈໃນການຮັບເສິກພວກເຂົາຍິນດີຮັບອາສາສມັກ. 3. ເຈົ້າຊີວິດທັງຫຼາຍຈົ່ງຟັງເທີ້ນແລະເຈົ້າຂຸນມຸນນາຍ ຈົ່ງຟັງດ້ວຍຂ້າ*

*ນ້ອຍຈະຮ້ອງເພງແລະເສບດົນຕີຖວາຍແດ່ພຣະຜູ້ເປັນເຈົ້າຂອງພວກອິສຣາເອນ. 4. ຂ້າແດ່ພຣະຜູ້ເປັນເຈົ້າເມື່ອພຣະອົງສະເດັດມາ*
*ຈາກພູແລະສະເດັດອອກມາຈາກເຂດເມືອງເອໂດມນັ້ນ ແຜ່ນດິນກໍຫວັ່ນໄຫວແລະຝົນກໍຕົກລົງມາຈາກທ້ອງຟ້າຊຶ່ງເປັນນໍ້າທີ່ຍ້ອຍລົງ*
*ມາຈາກກ້ອນເມືອ. 5. ພູທັງຫຼາຍກໍເຈື່ອນລົງຊ້ອງພຣະພັກພຣະຜູ້ເປັນເຈົ້າຂອງພູຊີນາຍ ແລະພຣະພັກພຣະຜູ້ເປັນເຈົ້າຂອງພວກອິສ*
*ຣາເອນ.*

ຢາເອນບໍ່ແມ່ນພົນທະຫານທີ່ມີປະສົບການ. ນາງເປັນແມ່ບ້ານ, ແຕ່ງງານກັບເຮເບີ (ພວກຜູ້ປົກຄອງ 4:17), ເຮເບີອາດຈະເປັນຄົນຄ້າຂາຍເພາະວ່າລາວໄດ້ຍ້າຍໄປໄກເທົ່າທີ່ລາວຈະເຮັດໄດ້ຈາກໝູ່ເພື່ອນຂອງລາວ, ແລະລາວເປັນມິດກັບກະສັດຢາບິນ (ຂໍ້ 11, 17). ຢາເອນເປັນຄົນທີ່ມີນິສັຍເຂົ້າກັບທຸກຄົນໄດ້ງ່າຍ, ສົງຄາມແລະຄວາມກົດດັນຕ່າງໆບໍ່ໄດ້ສົ່ງຜົນກະທົບກະເທືອນຕໍ່ຄອບຄົວລາວຫຼືວິທີການດຳເນີນຊີວິດຂອງນາງ, ຢາເອນສາມາດເຮັດທຸຣະກິດຂອງນາງໄດ້ຢ່າງງ່າຍດາຍ. ບາງທີບາຣາກຄິດວ່າການອ້າງເຖິງຜູ້ຍິງໝາຍເຖິງເດໂບຣາ (4:9), ບໍ່, ພຣະເຈົ້າມີແຜນການອື່ນທີ່ຈະໃຊ້ຄົນກ້າຫານທີ່ບໍ່ໜ້າເຊື່ອ, ທີ່ຜິດປົກກະຕິເພື່ອເຮັດໃຫ້ໄດ້ໄຊຊະນະ. ມື້ນັ້ນ, ຢາເອນໄດ້ເຮັດຢ່າງຖືກຕ້ອງ, ນາງໄດ້ຕອກໄມ້ຫລັກເຕັນໃສ່ຂະໝັບຂອງຊີເຊຣາ, ໃນຂນະທີ່ລາວນອນຫຼັບສນິດໃນເຕັນຂອງນາງ (ຂໍ້ 21). ດ້ວຍການຕັດສິນໃຈຢ່າງເດັດດ່ຽວ, ແລະເອົາຊະນະສັດຕູຢ່າງກ້າຫານ, ຊື່ຂອງນາງຖືກບັນທຶກໄວ້ໃນປວັດສາດ. ຢ່າງໃດກໍ່ຕາມ, ການຍົກຍ້ອງທີ່ແທ້ຈິງບໍ່ໄດ້ຊີ້ໄປຫາຢາເອນ, ບາຣາກ, ຫຼື ເດໂບຣາ, ເດໂບຣາໄດ້ຂຽນເພງ. ບາຣາກເຂົ້າຮ່ວມກັບນາງແລະຮ້ອງເພງສເລີມສລອງນີ້, ຫຼັງຈາກສົງຄາມ, ພວກເຂົານະມັສການພຣະຜູ້ເປັນເຈົ້າ! ຫຼັງຈາກພຣະຜູ້ເປັນເຈົ້າໄດ້ຍົກນໍ້າໜັກຂອງການສູ້ຮົບອອກຈາກບ່າຂອງພວກເຂົາແລ້ວ, ພວກເຂົາໄດ້ນະມັສການພຣະອົງ, ໃນມື້ນັ້ນ, ຈະມີວັນລະນຶກເຖິງເນື່ອງຈາກວ່າເດໂບຣາໄດ້ບັນທຶກໄວ້ໃນເພງ. ເດໂບຣາແຕ່ງເພງເພື່ອສເລີມສລອງໄຊຊະນະແລະຊ່ວຍປະຊາຊົນໃນການນະມັສການພຣະເຈົ້າ. ນາງໄດ້ບັນລະຍາຍແບບນັກກະວີ, ເນື່ອງຈາກການຊ່ວຍເຫຼືອຂອງພຣະເຈົ້າ, ສັດຕູຂອງພວກເຂົາຕົກຢູ່ໃນສະພາບຂອງຄວາມຕົກສະທ້ານຢ້ານກົວ. ແລະພູເຂົາໄດ້ລະລາຍ, ເຮັດໃຫ້ແຜ່ນດິນເປັນຕົມ, ວຽກງານຂອງພຣະເຈົ້າເຫັນໄດ້ຊັດເຈນໃນຄວາມສຳເຣັດຂອງພວກເຂົາ, ແລະພວກເຂົາໄດ້ຮັບຮູ້ສິ່ງນີ້ໂດຍການໃຫ້ກຽດແກ່ພຣະອົງສຳລັບທຸກໆຢ່າງທີ່ພວກເຂົາບັນລຸຜົນສຳເຣັດແມ່ນເປັນຄວາມພະຍາຍາມຂອງພວກເຂົາ.

## ນຳໃຊ້ໃນຊີວິດ

ການຮັບໃຊ້ຂອງທ່ານຕໍ່ພຣະເຈົ້າມີຄ່າສເມີ ເລືອກເອົານຶ່ງຂໍ້ຂອງການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- ❖ **ກຳນົດອຸປະສັກ.** ຈົ່ງຕອບວ່າ "ໂດຍ" ກັບສິ່ງໃດກໍ່ຕາມທີ່ພຣະເຈົ້າຮຽກເອີ້ນທ່ານ, ໂດຍບໍ່ຄຳນຶງເຖິງການຂັດເຄືອງຕໍ່ທ່ານ. ອຸປສັກອັນໃດທີ່ທ່ານກຳລັງປະເຊີນຢູ່? ແມ່ນຫຍັງຄືກຳແພງເຫຼັກກີດກັ້ນທ່ານແລະສິ່ງທີ່ພຣະເຈົ້າຢາກໃຫ້ທ່ານເຮັດ? ພຣະເຈົ້າຈະປະທານໃນສິ່ງທີ່ທ່ານຕ້ອງໄດ້ຊະນະ. ຈົ່ງເຕັມໃຈທີ່ຈະກ້າວອອກໄປຮັບໃຊ້ໃນຄວາມເຊື່ອ, ເຖິງແມ່ນວ່າທ່ານ "ເບິ່ງ" ມັນບໍ່ສາມາດເຮັດໄດ້.
- ❖ **ນະມັສການພຣະເຈົ້າ.** ນະມັສການພຣະອົງເຖິງແມ່ນວ່າໃນເວລາຜ່ານຄວາມຫຍຸ້ງຍາກ, ໃນໄຊຊະນະແລະການສູນເສັຽຂອງຊີວິດ. ພຣະເຈົ້າໃຊ້ພວກເຮົາເພື່ອເຮັດໃຫ້ພຣະປະສົງຂອງພຣະອົງສຳເຣັດ ແຕ່ຈົ່ງຈຳໄວ້ວ່າກຽດແລະຊື່ສຽງທັງໝົດເປັນຂອງພຣະອົງ, ວາງແຜນເວລາໃນແຕ່ລະມື້ໃນອາທິດນີ້ເພື່ອໃຊ້ເວລາກັບພຣະຜູ້ເປັນເຈົ້າ.
- ❖ **ເຮັດວຽກຮ່ວມກັນ.** ພຣະເຈົ້າຮຽກເອີ້ນໃຫ້ທ່ານນຳພາຫຼືມີສ່ວນຮ່ວມໃນໂຄງການອັນໃດນຶ່ງບໍ່? ເປັນຜູ້ຮ່ວມຢູ່ໃນທີມງານເພື່ອເຮັດວຽກເປັນທີມ. ເມື່ອທີມຊະນະ, ທຸກຄົນໃນທີມຊະນະ, ສຳຄັນທີ່ສຸດ, ແມ່ນພຣະເຈົ້າໄດ້ຮັບກຽດ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**